# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 29 ມິຖຸນາ 2008 ( 06-22-2008 )

---

## ຖ້າຫາກເງິນຂອງທ່ານເວົ້າໄດ້:

**ຂໍ້ພຣະຄັມພີໃນບົດຮຽນ:** (ສຸພາສິດ 3:9-10; 11:24-26; 13:11; 15:16-17; 16:11; 23:4-5)

**ຄຳຖາມແຫ່ງຊີວິດ:** ນິສັຍກ່ຽວກັບເຣື່ອງເງິນຂອງຂ້າພະເຈົ້າເປີດເຜີຍຫຍັງແດ່ກ່ຽວກັບຊີວິດ ແລະຄວາມເຊື່ອ

**ພຣະຄັມພີແຫ່ງຄວາມຈິງ:** ໄພ່ພົນຂອງພຣະເຈົ້າຕ້ອງຖວາຍກຽດແດ່ພຣະຜູ້ເປັນເຈົ້າໃນທາງທີ່ພວກເຂົາຄິດກ່ຽວກັບເງິນ, ແລະການໃຊ້ເງິນຂອງພວກເຂົາ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານໃຫ້ທ່ານໃນການໃຊ້ສະຕິປັນຍາຈາກເບື້ອງເທິງໃນຊີວິດປະຈຳວັນຂອງທ່ານໂດຍ:

- ການກວດສອບໃສ່ຫລັກການຂອງພຣະຄັມພີກ່ຽວກັບການຫາ ແລະການໃຊ້ເງິນທີ່ຖືກຕ້ອງ, ແລະ
- ການເລືອກເອົາທາງທີ່ຈະໃຫ້ທ່ານໃຫຍ່ຂຶ້ນໃນການຖວາຍກຽດແດ່ພຣະຜູ້ເປັນເຈົ້າກັບເຣື່ອງເງິນຂອງທ່ານ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ແນະນຳ:**

- ຖ້າເງິນຂອງງທ່ານເວົ້າໄດ້, ທ່ານຄິດວ່າມັນຈະເວົ້າຫຍັງແດ່? ໃຫ້ຂຽນ **ເງິນເວົ້າ** ຄອບປີ້ໃສ່ກະດາດແຈກຢາຍໃຫ້ນັກຮຽນຂຽນໃສ່ຈັກ ສອງສາມຂໍ້ ເຣື່ອງທີ່ເງິນເຂົາເຈົ້າເວົ້າ (ຖ້າເງິນນັ້ນເວົ້າ ມັນໄດ້ເວົ້າວ່າແນວໃດ) ຫລັງຈາກນັ້ນກໍໃຫ້ເຂົາເຈົ້າເວົ້າສິ່ງທີ່ເຂົາເຈົ້າໄດ້ຂຽນນັ້ນສູ່ກັນຟັງ. ອັນນັ້ນເປັນສິ່ງທີ່ເງິນຂອງທ່ານອາດຈະເວົ້າເຣື່ອງທ່ານ, ບັດນີ້, ມາເບິ່ງວ່າພຣະຄຳຂອງພຣະເຈົ້າທີ່ເວົ້າເຣື່ອງເງິນ.

## 1. ກວດກາເບິ່ງຊີວິດຝ່າຍວິນຍານຂອງທ່ານຢ່າງສະໝໍ່າສເມີ: (ສຸພາສິດ 3:9-10; 15:16-17)

- ຂໍໃຫ້ນັກຮຽນສອງຄົນອາສາສມັກອ່ານພຣະທັມ ສຸພາສິດ 3:9-10
- ຊີ້ໃຫ້ເຫັນລັກສະນະທີ່ມີຄວາມສັມພັນກັນໃນຂໍ້ຕ່າງໆ ສັງເກດເບິ່ງປໂຍກທີ່ສອງຢູ່ບ່ອນໃດທີ່ຄ້າຍຄືກັບປໂຍກທີນຶ່ງ. ໃຫ້ຈັດນັກຮຽນເປັນສອງກຸ່ມ, ໃຫ້ກຸ່ມໃດກຸ່ມນຶ່ງອ່ານກັບໄປກັບມາຈັກສອງສາມຄັ້ງ, ໃຫ້ກຸ່ມທີນຶ່ງເວົ້າໃນປໂຍກທີນຶ່ງ ແລະກຸ່ມທີສອງເວົ້າໃນປໂຍກທີສອງສູ່ກັນຟັງ.
- ໃຫ້ຜູ້ນຶ່ງອ່ານພຣະທັມສຸພາສິດ 15:16-17. ແລ້ວຈັດນັກຮຽນເປັນກຸ່ມໆ ແລ້ວແຕ່ມີນັກຮຽນໜ້ອຍ ຫລືຫລາຍໃນຫ້ອງຮຽນຂອງທ່ານ, ແລະໃຫ້ແຕ່ລະກຸ່ມສົນທະນາໃນຂໍ້ພຣະຄັມພີແຫ່ງຄວາມຈິງ. ຫລັງຈາກສີ່ ຫລືຫ້ານາທີ ແລ້ວໃຫ້ແຕ່ລະກຸ່ມສລຸບສິ່ງທີ່ເຂົາເຈົ້າໄດ້ສົນທະນາກັນມາສູ່ກັນຟັງ.

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ສຸພາສິດ 3:9-10; 15:16-17)

1. ໃນທາງໃດທີ່ພວກເຮົາໄດ້ໃຫ້ກຽດຍ້ອງຍໍ ຫລືບໍ່ໃຫ້ກຽດຍ້ອງຍໍພຣະເຈົ້າໂດຍການຄອບຄອງຊັບສົມບັດ ແລະຄວາມຮັ່ງມີຂອງພວກເຮົາ?
2. ໃນການຊັ່ງຊາ 1 ເຖິງ 10 ເດ, ທ່ານໄດ້ໃຫ້ກຽດແດ່ພຣະເຈົ້າຄອບຄອງລາຍໄດ້ຂອງທ່ານຢ່າງໃດ? ໃນຂັ້ນຕອນໃດທີ່ທ່ານນໍາມາໃຊ້ເພື່ອເປັນການຖວາຍກຽດແດ່ອົງພຣະຜູ້ເປັນເຈົ້າໃນຣາຊອານາຈັກຂອງພຣະອົງ?

## 2. ຢ່າຕົກໃນຫລຸມຮັກຂອງເງິນ: (ສຸພາສິດ 23:4-5)

- ຂໍໃຫ້ນັກຮຽນອາສາສມັກອ່ານ ສຸພາສິດ 23:4-5
- ທ່ານຈະເຮັດແນວໃດໃນເມື່ອທ່ານຮູ້ຈັກວ່າທ່ານໄດ້ຫລົງຮັກກັບຄົນໃດຄົນນຶ່ງ? ບາງທີອາດຈະຕອບຢ່າງນີ້: ໃຊ້ເວລາຢູ່ກັບຄົນນັ້ນໃຫ້ຫລາຍທີ່ສຸດ,ການຢັບຢັ້ງເວລາທີ່ຈະໄປຫາຄົນນັ້ນຍາກທີ່ສຸດ, ຢາກຈ້ອງເບິ່ງໜ້າຄົນນັ້ນດົນໆ. ນັ້ນເປັນການຊີ້ໃຫ້ເຫັນວ່າການຕົກຢູ່ໃນຫລຸມຮັກເງິນກໍເໝືອນກັນ.
- ນໍາເອົາປໂຍກທີ່ວ່າ "**ຂ້າພະເຈົ້າໄດ້ຮຽນການໃຊ້ເງິນ ແລະ ຮັກຄົນຫລາຍກວ່າເງິນ ແລະໃຊ້ຄົນ**" ມາສົນເປັນບົດສົນທະນາ.

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ສຸພາສິດ 23:4-5)

1. ຄົນທີ່ພຍາຍາມເຮັດໃຫ້ຕົນເອງຮັ່ງມີນັ້ນ,ເຂົາໄດ້ຈ້ອງມອງເອົາໃຈໃສ່ໃນສິ່ງໃດ?
2. ທ່ານເຄີຍມີຄວາມຮູ້ສຶກບໍ່ສະບາຍໃຈຕໍ່ການເຂົ້າມີສ່ວນໃນສິ່ງອະນິຈັງເຫລົ່ານີ້ບໍ່?
3. ຜູ້ຂຽນພຣະທັມສຸພາສິດໄດ້ຊີ້ບອກຜົນຮັບຂອງການເອົາໃຈໃສ່ໃນຄວາມຮັ່ງມີຝ່າຍໂລກນີຫຍັງແດ່?
4. ທ່ານຈະເສີມສ້າງຄວາມສັດທາໃນພຣະເຈົ້າໃຫ້ເໝາະສົມກັບການເງິນໄດ້ແນວໃດ?

## 3. ຫາເງິນທຸກໆ ເຊັນດ້ວຍຄວາມສັດຊື່: (ສຸພາສິດ 13:11; 16:11)

- ຂໍໃຫ້ນັກຮຽນອາສາສມັກອ່ານ ສຸພາສິດ 13:11; 16-11
- ຈັດນັກຮຽນເປັນສອງກຸ່ມ, ກຸ່ມທີນຶ່ງ "**ຊັບສົມທີ່ໄດ້ມາຢ່າງໄວວາ, ຮັ່ງມີໄວທີ່ສຸດ**" ກຸ່ມທີສອງເປັນກຸ່ມທີ່ "**ຂຍັນໝັ່ນພຽນ ແລະມີຣະບຽບວິນັຍດີ**" ໃຫ້ແຕ່ລະກຸ່ມຂຽນ "**ການໂຄສະນາ**" ການເຢົ້າຢວນຊວນໃຫ້ຄົນມາໃຊ້ການເງິນຂອງເຂົາ. ຫລັງຈາກນັ້ນໃຫ້ແຕ່ລະກຸ່ມນໍາເອົາໃບໂຄສະນາມາແບ່ງປັນສູ່ກັນຟັງ.
- ໃນການສົນທະນາຂອງສອງເຣື່ອງນີ້ ແມ່ນເຣື່ອງໃດທີ່ກ່ຽວຂ້ອງໃນພຣະຄັມພີ ແລະດ້ວຍເຫດໃດ?

- ໃຫ້ນັກຮຽນຕອບສນອງຕໍ່ຄຳຖາມທີ 2 ແລະ 3 ໃນບົດຮຽນນີ້.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ສຸພາສິດ 13:11; 16:11)

1. ແມ່ນຫຍັງແດ່ທີ່ພຣະຄັມພີໄດ້ສອນພວກເຮົາກ່ຽວກັບສິດທິຂອງເງິນ ໃນພຣະທັມສຸພາສິດ 13:11; 16:11 ນັ້ນ?
2. ເຮັດແນວໃດທ່ານຈຶ່ງຈະມີປະສົບການອັນແທ້ຈິງກ່ຽວກັບກົດເກນຢ່າງນີ້ໃນຊີວິດຂອງທ່ານ?
3. ທ່ານຈະເອົາເງິນຂອງທ່ານມາໃຊ້ຈ່າຍໃຫ້ຖືກຕ້ອງໃນຊີວິດປະຈຳວັນຂອງທ່ານໄດ້ຢ່າງໃດ?

4. <u>**ໃຫຍ່ຂຶ້ນໃນຄວາມເອື້ອເຟື້ອເພື່ອແຜ່:**</u> (ສຸພາສິດ 11:24-26)

- ຂໍໃຫ້ນັກຮຽນອາສາສມັກອ່ານ ສຸພາສິດ 11:24-26
- ໃຫ້ຂຽນ "**ຖ້າຫາກ ແລະ ຈາກນັ້ນ**" ໃສ່ກະດານ. ແລ້ວໃຫ້ນັກຮຽນປ່ຽນ ຖ້າຫາກ ຫລື ຈາກນັ້ນໃສ່ໃນການຂຶ້ນຕົ້ນຂອງປໂຍກໃນຂໍ້ພຣະຄຳເຫລົ່ານີ້, ດ້ວຍຄຳເວົ້າຂອງເຂົາເຈົ້າເອງ.
- ບາງຄົນ "**ຈະເຣີນຂຶ້ນ,**" **ລ້ຳລວຍ,**" **ແລະ ສົດໃສຂຶ້ນ.**" ໃຫ້ຄວາມໝາຍສຳຄັນຄຳເຫລົ່ານີ້ ໂດຍບໍ່ຈຳເປັນຕ້ອງໃຫ້ເປັນການຈະເຣີນຂຶ້ນທາງດ້ານການເງິນກໍໄດ້.
- ສເນີໃຫ້ຜູ້ໃດຜູ້ນຶ່ງເປັນພຍານກ່ຽວກັບເຣື່ອງນີ້.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ສຸພາສິດ 11:24-26)

1. ຜູ້ຂຽນພຣະທັມສຸພາສິດໄດ້ພັລນາຜົນປໂຍດຂອງການໃຫ້ດ້ວຍໃຈກວ້າງຂວາງວ່າຢ່າງໃດ?
2. ຜູ້ທີ່ໃຫ້ດ້ວຍໃຈກວ້າງຂວາງຈະໄດ້ຮັບພຣະພອນເພີ້ມຂຶ້ນຢ່າງໃດແດ່?
3. ຄວາມຈິງໃນພຣະຄຳເຫລົ່ານີ້ໄດ້ໃຫ້ຄວາມກະຈ່າງແຈ້ງໃນຊີວິດຂອງທ່ານແນວໃດ?
4. ທ່ານໄດ້ມີແຜນການທີ່ຈະໃຫ້ຈິດວິນຍານຂອງທ່ານຈະເຣີນຂຶ້ນໄດ້ຢ່າງໃດ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ພຣະເຈົ້າຢາກໃຫ້ພວກເຮົາໃຫ້ກຽດພຣະອົງດ້ວຍການເງິນຂອງພວກເຮົາດ້ວຍ.
- ໝາກຜົນແຮກຂອງການດຳຣົງຊີວິດຂອງພວກເຮົາເປັນຂອງອົງພຣະຜູ້ເປັນເຈົ້າ.
- ປະຖິ້ມຄວາມໂລບຊຶ່ງເປັນການທຳລາຍຊີວິດການເປັນຢູ່ຂອງພວກເຮົາ ແລະ ຂອງຜູ້ອື່ນເສັຽ.
- ພວກເຮົາຕ້ອງການທີ່ຈະໃຫ້ກຽດພຣະເຈົ້າເປັນການສະແດງຄວາມດີ, ຄວາມສັດຊື່ຂອງພວກເຮົາ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH